# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 8 ມົກກະຣາ 2006 (1-8-2006)

---

## ເຣື່ອງຂອງເງິນ

**ຂໍ້ພຣະຄັມພີໃນບົດຮຽນ:** ລູກາ 12:16-21,27-28,31-34,42-44,48ຂ
**ພຣະຄັມພີແຫ່ງຄວາມຈິງ:** ພວກທີ່ເຊື່ອຕ້ອງຕິດຕາມຣາຊແຜ່ນດິນຂອງພຣະເຈົ້າໃຫ້ເຫນືອກ່ວາທຸກສິ່ງ ແລະຝຶກຝົນໃນການເປັນຜູ້ດູແລຮັກສາທີ່ສລາດເຫນືອລາຍໄດ້ຂອງພວກເຂົາ.
**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແຕ່ງຂື້ນເພື່ອຊ່ວຍທ່ານໃນການພັດທະນາທັສນະທີ່ຖືກຕ້ອງຕໍ່ຫົວເຣື່ອງນີ້ໂດຍ:

- ໄຈ້ແຍກຄວາມແຕກຕ່າງລະຫວ່າງຄຸນຄ່າຊົ່ວຄາວຂອງເງິນແລະຄຸນຄ່າອັນຕລອດໄປເປັນນິດຂອງຣາຊອານາຈັກພຣະເຈົ້າ; ແລະ
- ການບາກບັ່ນມຸ້ງຫນ້າທີ່ຈະເຮັດໃຫ້ຣາຊອານາຈັກຂອງພຣະເຈົ້າເປັນນ້ຳເບີນຶ່ງໃນຊີວິດຂອງທ່ານ.

### ເຮົາຈະສາມາດແນ່ນອນໃຈໄດ້ຢ່າງໃດວ່າເງິນທີ່ເຮົາເປັນເຈົ້າຂອງມັນນັ້ນຈະບໍ່ເປັນເຈົ້າຂອງຕົວເຮົາ?

ມີນັກທຸຣະກິດກວ່າ 2700 ຄົນທີ່ປະເທດເອເນຊູເອລາໄດ້ຕັດສິນໃຈໃນການຕິດຕາມພຣະຄຣິດທີ່ກອງປະຊຸມຫລວງສຳລັບພວກຂັ້ນລະດັບຄວາມຮູ້ສູງ. ແຮໂຣ ຟິນຈ໌, ອະດີດນັກວິທະຍາສາດຂອງອົງການນາຊາ, ປະທານຂອງໂຮງຮຽນວິທະຍາລັຍ, ແລະມີທຸຣະກິດເປັນຂອງຕົວເອງ, ໄດ້ແບ່ງປັນເຖິງການທີ່ພຣະເຈົ້າຊົງເປັນໃຈກາງສຳລັບຄວາມສຳເຣັດຜົນ. "ຫລັງຈາກທີ່ຂ້າພະເຈົ້າສິ້ນສຸດພາກສເນີທຸຣະກິດທັມມະດາແລ້ວ, ຂ້າພະເຈົ້າໄດ້ບອກພວກເຂົາວ່າ ຄວາມສຳເຣັດຜົນທີ່ໃຊ້ການໄດ້ຄືຄວາມສຳເຣັດຜົນອັນຕລອດໄປເປັນນິດ," ທ່ານ ຟິນຈ໌ກ່າວ, "ແລະຕໍ່ຈາກນັ້ນຂ້າພະເຈົ້າໄດ້ແບ່ງປັນແຜນການຂອງພຣະເຈົ້າໃນການໄຖ່ໃຫ້ພົ້ນບາບ."

ໃນສັງຄົມທີ່ຄວາມມັ່ງມີສ່ວນຫລາຍແມ່ນຄຽງຄູ່ມາກັບຍົດອຳນາດ, ເປັນແຫລ່ງຊັກຈູງ, ໃນບາງກໍຣະນີ,ຊື່ສຽງໂດ່ງດັງ, ຄົນສ່ວນຫລາຍເຫັນວ່າເປັນໂອກາດທີ່ຈະເຮັດໃຫ້ຕົນເອງມີຄວາມມັ່ງມີເພີ້ມເຕີມຂື້ນໃນຄວາມຫມາຍທີ່ວ່າມີຄວາມຄົບເຕັມເພີ້ມຂື້ນໃນຊີວິດ. ແຕ່ວ່າ, ຄວາມມັ່ງມີສ່ວນຫລາຍແລ້ວມັນບໍ່ໄດ້ນຳແມ້ກະທັ້ງຄວາມປອດພັຍມາສູ່ຕາມທີ່ຄົນຄິດຫມາຍໄວ້. ຄົນຕ້ອງການຄວາມເຂົ້າໃຈ-ແລະພວກທີ່ເຊື່ອຕ້ອງຖືກເຕືອນໃຈວ່າຄວາມຮັ່ງມີດ້ານວັດຖຸສິ່ງຂອງເປັນສິ່ງທີ່ມີປີກບິນຫາຍຫນີຢ່າງວ່ອງໄວ.

*ຄວາມມັ່ງມີສຳຄັນຢ່າງໃດຕໍ່ທ່ານ? ເປັນດ້ວຍເຫດໃດ?*

### ສຶກສາພຣະຄັມພີ

1. **ຈຳໄວ້ສເມີວ່າຄວາມມັ່ງມີດ້ານວັດຖຸສິ່ງຂອງບໍ່ທ່ຽງຫມັ້ນ** (ລູກາ 12:16-21)

ຝູງຊົນປາກົດວ່າມັກຕິດຕາມພຣະເຢຊູສເມີ. ມີຫລາຍຄົນມາຊຸມນຸມກັນເພື່ອຟັງພຣະເຢຊູແລະພວກເຂົາກໍເລີ້ມບໍ່ມີລະບຽບ, ຢຽບຊີງກັນຫມົ້ນເຂົ້າໃກ້ພຣະອົງ. ມີຄົນນື່ງໄດ້ເຂົ້າໃກ້ພຣະເຢຊູ, ແລະກໍບໍ່ສົນໃຈວ່າພຣະເຢຊູກໍາລັງເວົ້າເຣື່ອງອັນໃດ, ແລະລາວບອກພຣະເຢຊູໃຫ້ກ່າວຄໍາແນະນໍາອ້າຍຂອງລາວໃນການແບ່ງປັນມໍຣະດົກໃຫ້ແກ່ຕົນ. ພຣະເຢຊູໄດ້ຕັກເຕືອນຊາຍຄົນນັ້ນກ່ຽວເຣື່ອງຄວາມໂລບຂອງລາວແລະໃຊ້ຄໍາອຸປະມາເພື່ອສອນພວກສາວົກເຖິງຄວາມຈິງທີ່ຍິ່ງໃຫຍ່. ພຣະເຢຊູສ່ວນຫລາຍໃຊ້ຄໍາ**ອຸປະມາ**ໃນການສອນ (ມາຣະໂກ 4:33-34). ຄໍາອຸປະມາແມ່ນເຣື່ອງແທ້ຈິງໂດຍມີຫລັກການຝ່າຍຈິດວິນຍານແຝງຊ້ອນຢູ່. ໂດຍໃຊ້ເຣື່ອງລາວຕ່າງໆ, ພຣະເຢຊູເຮັດໃຫ້ຜູ້ຟັງມີຄວາມສົນໃຈ. ຄໍາອຸປະມາຂອງພຣະອົງກໍຍັງເຮັດໃຫ້ພວກເຂົາສາມາດໄຈ້ແຍກເຖິງເຣື່ອງຣາວນັ້ນອີກດ້ວຍ.ໃນການເລົ່າເຣື່ອງ, ພຣະເຢຊູໄດ້ເວົ້າເຖິງຊາຍ**ຮັ່ງ**ມີຄົນນື່ງ. ພຣະເຢຊູໄດ້ໃຊ້ຄໍາເວົ້າເຈາະຈົງທີ່ຊີ້ໃຫ້ເຫັນວ່າຊາຍຄົນນີ້ຮັ່ງມີດ້ານວັດຖຸສິ່ງຂອງ. ສິ່ງແວດລ້ອມຕ່າງໆກໍອໍານວຍເພາະວ່າ**ດິນກໍໃຫ້ຄວາມອຸດົມສົມບູນ.** ເຫດການໄດ້ຄ້າຍຄືກັບພໍ່ນາທີ່ໄດ້ເຂົ້າເຕັມເລົ້າໃຫຍ່ຫລືນັກທຸຣະກິດທີ່ໄດ້ກໍາໄລຢ່າງງາມງາມ. ບັນຫາບໍ່ແມ່ນກ່ຽວເຣື່ອງພຣະພອນໃນການໄດ້ຮັບລາຍໄດ້ເພີ້ມເຕີມ, ແຕ່ແມ່ນຄຸນຄ່າທີ່ເຮົາວາງໃສ່ວັດຖຸສິ່ງຂອງເຫລົ່ານັ້ນ. ຊາຍຮັ່ງມີຄົນນັ້ນກະກຽມພ້ອມທີ່ຈະເກັບຮັກສາວັດຖຸສິ່ງຂອງຂອງລາວແຕ່ຂາດການເອົາໃຈໃສ່ຕໍ່ຈິດວິນຍານຂອງຕົນ. ລາວ**ຄິດໃນໃຈຕົວເອງ,** ມີຫລາຍທາງເລືອກ, "**ເຮົາຈະເຮັດຢ່າງໃດຫນໍ?**" ລາວຄວນຈະແບ່ງປັນໃຫ້ກັບຄົນທີ່ມີໂອກາດຫນ້ອຍກວ່າຕົນ. ລາວຄວນຈະຂາຍສິ່ງທີ່ເຫລືອນັ້ນແລະແຈກຢາຍຊ່ວຍຄົນທຸກຍາກ, ຂະນະທີ່ລາວເອງກໍບໍ່ມີເລົ້າທີ່**ຈະເກັບເຂົ້າ**ນັ້ນ. ຢ່າງນ້ອຍທີ່ສຸດ, ລາວຄວນຈະຢຸດຄິດແລະກ່າວຂອບຄຸນພຣະເຈົ້າສໍາລັບພຣະພອນອັນອັສຈັນ. ແທນທີ່ຈະເປັນຢ່າງນັ້ນ, ລາວຖືກສອນໃຫ້ຮັກແຕ່ຕົນເອງ. ໂດຍການມ້າງເລົ້າເກົ່າແລະສ້າງ**ເລົ້າໃຫມ່ທີ່ໃຫຍ່ກວ່າເກົ່າ**ແທນ, ເພື່ອຈະ**ເກັບກໍາຮັກສາເຂົ້າຂອງ**ໆລາວທັງຫມົດ. ການໃຊ້ທັງສອງຄໍາຊີ້ໃຫ້ເຫັນວ່າລາວບໍ່ພຽງແຕ່ຈະເກັບຜົນປູກແຕ່ຍັງເກັບຂອງທັງຫມົດທີ່ລາວມີໄວ້ໃຊ້ໃນ**ຫລາຍປີ**ທີ່ຈະມາ. ຢ່າງນ້ອຍລາວກໍຈະ**ຢູ່ແບບສະບາຍສະບາຍ**. ລາວຕ້ອງການຫາ**ຄວາມສນຸກ**ແກ່ຕົວລາວເອງຕລອດຊີວິດໂດຍບໍ່ຢາກຄິດເຖິງພຣະເຈົ້າແລະຄົນອື່ນ. ການກຸ້ມຕົນເອງຄືເປົ້າຫມາຍສູງສຸດໃນຊີວິດ. ລາວຄິດເຖິງພຽງແຕ່ຄວາມສນຸກສນານສ່ວນຕົວ. ພຣະເຈົ້າຮ້ອງຊາຍຄົນນີ້ວ່າ**ຄົນໂງ່**. ຜູ້ທີ່ຂຽນພຣະທັມເພງສັຣເສີນໄດ້ໃຊ້ຄໍາເວົ້າດຽວກັນນີ້ເພື່ອບັນລະຍາຍເຖິງຜູ້ທີ່ບໍ່ຕ້ອງການພຣະເຈົ້າ (ພສສ. 14:1). ໃນຄໍາອຸປະມານີ້, ພຣະເຈົ້າປະກາດວ່າ**ຊີວິດ**ຂອງຊາຍຜູ້ນີ້ຈະ**ຖືກຮ້ອງໄປໃນຄ່ໍາຄືນນີ້**ພຣະເຢຊູຕັ້ງຄໍາຖາມໄວ້ວ່າ: ເມື່ອຄວາມຕາຍມາເຖິງ, ໃຜຈະເປັນເຈົ້າຂອງຕໍ່**ສິ່ງທັງຫມົດ**ທີ່ຊາຍຜູ້ນີ້ໄດ້ສະສົມໄວ້? ຂະນະທີ່ລາວຢືນຢູ່ຕໍ່ຫນ້າພຣະເຈົ້າ, ບໍ່ມີສິ່ງຂອງອັນໃດທີ່ຈະຊ່ວຍລາວໄວ້ໄດ້. ລາວເກັບທ້ອນໂຮມ**ຊັບສົມບັດສໍາລັບຕົນເອງແລະກໍບໍ່ເປັນການຮັ່ງມີຕໍ່ພຣະເຈົ້າ**. ສິ່ງທີ່ລາວຄິດວ່າເປັນຂອງມີຄ່າກໍຖືກຫມ້ຽງກັດກິນຂະນະທີ່ລາວໃຫ້ຄໍາຕອບຢູ່ໃນບ່ອນນິຣັນດອນສໍາລັບຂອງທີ່ມີຄຸນຄ່າຊົ່ວຄາວທີ່ປາສະຈາກພຣະເຈົ້າ. ບາງຄົນໃນພວກເຮົາເມື່ອວາດພາບເບິ່ງແລ້ວກໍເປັນການງ່າຍຫລາຍທີ່ທຸກຢ່າງຈະສູນຫາຍໄປຫລືການເພີ້ມພູນວັດຖຸສິ່ງຂອງບໍ່ໄດ້ຊ່ວຍຫຍັງເລີຍເມື່ອເຮົາຢືນຢູ່ຕໍ່ຫນ້າພຣະເຈົ້າ. ຜູ້ທີ່ເຊື່ອຄວນຈະ "ຮັ່ງມີໃນພຣະເຈົ້າ." ຫລັກການນີ້ແມ່ນລວມທັງການມີທັສນະທີ່ຖືກຕ້ອງຕໍ່ຄຸນຄ່າຂອງຄວາມຮັ່ງມີດ້ານວັດຖຸສິ່ງຂອງແລະທັມມະຊາດອັນຕລອດໄປຂອງຈິດໃຈ.

## ໒. ໄວ້ວາງໃຈໃນພຣະເຈົ້າສໍາລັບຄວາມຕ້ອງການຂອງທ່ານ (ລູກາ 1໒:໒7-໒8)

ພຣະເຢຊູໄດ້ຫນູນໃຈພວກທີ່ຕິດຕາມພຣະອົງໃຫ້ໄວ້ວາງໃຈໃນພຣະເຈົ້າສໍາລັບຄວາມຕ້ອງການແຕ່ລະມື້ຂອງພວກເຂົາ. ພຣະອົງໄດ້ຊີ້ໃສ່ພວກນົກແລະໃຫ້ສັງເກດເບິ່ງວ່າພຣະເຈົ້າໄດ້ລ້ຽງພວກເຂົາຢ່າງໃດ(ລູກາ1໒:24).

ພຣະອົງຍັງໄດ້ຫນູນນໍ້າໃຈຜູ້ທີ່ຟັງພຣະອົງໃຫ້ຮຽນຈາກ**ດອກໄມ້ປ່າ**, ທີ່ນຸ່ງຮົ່ມເຄື່ອງງົດງາມຈາກພຣະຜູ້ເປັນເຈົ້າ. ສ່ວນຫລາຍແລ້ວພວກຄົນເຫລົ່ານັ້ນກໍຄຸ້ນເຄີຍກັບສະຖານະການຂ້າງນອກດີ, ພຣະເຢຊູຄືຈະອ້າແຂນພຣະອົງອອກໃສ່ດອກໄມ້ປ່າເຫລົ່ານັ້ນທີ່ເກີດຂຶ້ນຖ້າມກາງພວກເຂົາ. ພຣະເຢຊູໄດ້ໃຊ້ຄໍາເວົ້າໃນການອະທິບາຍໃຫ້ຄົນເຂົ້າໃຈຈຸດຫມາຍຂອງພຣະອົງ.ຫນ້າສົນໃຈຕົ້ນດອກໄມ້**ບໍ່ສາມາດເຮັດການຫລືເຂັນຝ້າຍ**. ບາງທີພຣະເຢຊູມີຮອຍຍິ້ມເບົາໆທີ່ໃບຫນ້າຂະນະທີ່ເວົ້າຄໍາເຫລົ່ານີ້ຢູ່. ພຣະອົງຊີ້ໃຫ້ເຫັນວ່າພຣະເຈົ້າສາມາດທະນຸຖນອມດອກໄມ້ປ່າທັມມະດາເຫລົ່ານີ້ ໃຫ້ມີຄວາມງົດງາມຍິ່ງກ່ວາ**ສະງ່າຣາສີອັນບໍຣິບູນຂອງກະສັດໂຊໂລໂມນ**. ຈຸດທີ່ພຣະເຢຊູໄດ້ກ່າວໃນທີ່ນີ້ກໍແມ່ນວ່າພຣະເຈົ້າເປັນຫ່ວງໃຍໄພ່ພົນຂອງພຣະອົງຫລາຍກ່ວາ**ດອກຫຍ້າ**ທີ່ເກີດໃນ**ທົ່ງ**ແຕ່ມື້ນີ່ງແລະຈະ**ຖືກຖິ້ມໃສ່ກອງໄຟ**ໃນມື້ຕໍ່ໄປ. ໃນຄວາມຄິດທີ່ເອົາໂຍນເຂົ້າກອງໄຟອາດຈະມີຄວາມຫມາຍທີ່ຕົ້ນພືດໃຊ້ຕາງນໍ້າມັນ. ພືດພັນກໍມີຄຸນຄ່າເນື້ອໃນແທ້ພຽງເລັກນ້ອຍ, ປານນັ້ນພຣະເຈົ້າກໍຫ່ວງໃຍມັນ. ຫລາຍກ່ວານັ້ນຈັກພຽງໃດພຣະເຈົ້າເປັນຫ່ວງໃຍພວກເຮົາ.ການພິພາກສາຂອງພຣະເຢຊູຕໍ່ຜູ້ທີ່ມີ**ຄວາມເຊື່ອຫນ້ອຍ**ກໍແມ່ນການອອກແບບແຜນໃຫ້ເປັນສິ່ງກະຕຸ້ນໃຈພວກເຂົາໃຫ້ມີຄວາມເຊື່ອທີ່ຍິ່ງໃຫຍ່ຂຶ້ນ. ພຣະອົງບໍ່ໄດ້ສົນໃຈໃນການກ່າວໂທດພວກເຂົາແຕ່ວ່າແທນທີ່ຈະເປັນຢ່າງນັ້ນພຣະອົງໄດ້ຊັກນໍາໃຫ້ໄວ້ວາງໃຈພຣະເຈົ້າໃນສິ່ງທີ່ຕ້ອງການປະຈໍາວັນເພື່ອພວກເຂົາຈະສາມາດຈົດຈໍ່ໃນເຣື່ອງທີ່ສໍາຄັນຢ່າງແທ້ຈິງຂອງຣາຊອາຈັກ. ຜູ້ທີ່ເຊື່ອຄວນໄວ້ວາງໃຈພຣະເຈົ້າໃນການປະທານສິ່ງຈໍາເປັນຂອງຊີວິດ. ພຣະອົງບໍ່ພຽງແຕ່ຮູ້ຈັກເຖິງຄວາມຕ້ອງການຂອງພວກເຮົາເທົ່ານັ້ນ, ພຣະອົງມີຄວາມຊົມຊື່ນຍິນດີຫລາຍໃນການຕອບສນອງຄວາມຕ້ອງການຂອງພວກເຮົາ. ພຣະອົງຕ້ອງການໃຫ້ພວກເຮົາວາງໃຈເຊື່ອພຣະອົງເພື່ອພວກເຮົາຈະສາມາດມອບຕົວເຮົາເອງຮັບໃຊ້ແລະນະມັສການພຣະອົງ.

## 3. ຕິດຕາມຣາຊອາຈັກຂອງພຣະເຈົ້າເຫນືອກ່ວາສິ່ງໃດທັງປວງ (ລູກາ 12:31-34)

ພຣະເຢຊູໄດ້ເຕືອນໃຈພວກສາວົກວ່າບໍ່ຄວນກະວົນກະວາຍຕໍ່ສິ່ງທີ່ບໍ່ມີຄ່າເຊັ່ນເຣື່ອງເຄື່ອງດື່ມເຄື່ອງກິນເພາະວ່າພຣະບິດາໄດ້ຮູ້ຈັກຄວາມຕ້ອງການນີ້ຮຽບຮ້ອຍແລ້ວ. ພວກເຂົາຄວນຈະຊອກຫາແຜ່ນດິນຂອງພຣະເຈົ້າແລະຄວາມຊອບທັມກ່ອນສິ່ງອື່ນໃດທັງຫມົດ, ການເຊື່ອວາງໃຈວ່າ**ສິ່ງອື່ນໆ**ກໍຈະຖືກ**ປະທານ**ໃຫ້ໂດຍພຣະບິດາ. ຫລັງຈາກການຫນູນນໍາໃຈພວກທີ່ຟັງພຣະອົງໃຫ້**ສແວງ**ຫາ**ແຜ່ນດິນຂອງພຣະເຈົ້າ**ກ່ອນ, ພຣະເຢຊູໄດ້ຊີ້ແຈງໃຫ້ພວກເຂົາລົງມືປະຕິບັດງານໃຫ້ສອດຄ່ອງກັບຄວາມຈໍາເປັນອັນທໍາອິດນັ້ນ. ໃຫ້ພວກເຂົາຮູ້ວ່າ**ພຣະບິດາກໍປິຕິຍິນດີຫລາຍ**ທີ່ພຣະອົງໄດ້ປະທານ**ຣາຊອານາຈັກ**ໃຫ້ແກ່ພວກເຂົາ, ພຣະເຢຊູຊັກຊວນໃຫ້ພວກສາວົກບໍ່ໃຫ້**ວິຕົກ**ຕໍ່ອະນາຄົດ. ໃນຄໍາສັ່ງທີ່ບອກວ່າຈົ່ງ**ຂາຍສິ່ງທັງປວງທີ່ມີນັ້ນ**ແລ້ວ**ແຈກຢາຍໃຫ້ພວກທຸກຈົນ**ບໍ່ແມ່ນບັນຍັດສໍາລັບຄຣິສຕຽນທຸກຄົນທີ່ຈະຕ້ອງໄປຂາຍທຸກໆຢ່າງທີ່ມີນັ້ນແລ້ວເອົາໄປແຈກຢາຍຕາມບ່ອນທີ່ມີຄວາມທຸກຈົນ. ພຣະເຢຊູຕ້ອງໃຫ້ພວກທີ່ຕິດຕາມພຣະອົງໃຫ້ຫລີດຈາກບ່ວງແຮ້ວແລະການຊ້ອນລີ້ຂອງຄວາມຮັ່ງມີດ້ານວັດຖຸສິ່ງຂອງ. ໂດຍການໃຊ້ຄໍາວ່າໄປ**ຂາຍ**ຂອງທີ່ມີແລ້ວ**ແບ່ງປັນ**ໃຫ້ຄົນທີ່ມີຄວາມທຸກຈົນ. ທັງສອງຢ່າງນີ້ສະແດງໃຫ້ເຫັນເສຣີພາບທີ່ນໍາອອກຈາກຄວາມໂລບມາກ. ພຣະເຢຊູໄດ້ອະທິບາຍເຖິງ**ຊັບສົມບັດທີ່ບໍ່ມີມື້ຫມົດຈັກເທື່ອ**ທີ່ພວກເຂົາຈະມີ**ໃນສວັນທີ່ຂໂມຍ**ບໍ່ສາມາດລັກເອົາໄດ້ແລະບ່ອນທີ່**ໂຕມອດກັດກິນບໍ່ໄດ້**. ການເນັ້ນຕົ້ນຕໍຂອງພຣະເຢຊູຕໍ່ຜູ້ທີ່ຕິດຕາມພຣະອົງຄືໃຫ້ເຂົາເຈົ້າມີຊັບສົມບັດແລະໃຫ້ໃຈຈົດຈໍ່ຫາແຜ່ນດິນສວັນ. ການດໍາຣົງຊີວິດຂອງຜູ້ທີ່ເຊື່ອຄວນຈະສະທ້ອນໃຫ້ເຫັນຣາຊອານາຈັກຂອງພຣະເຈົ້າທີ່ຕັ້ງຢູ່ຕລອດໄປໃຫ້ມີຄຸນຄ່າຫລາຍກ່ວາຄວາມຮັ່ງມີດ້ານວັດຖຸສິ່ງຂອງ.

**4. ເປັນຜູ້ຄຸ້ມຄອງເບິ່ງແຍງທີ່ດີໃນທຸກສິ່ງທີ່ທ່ານມີ** (ລູກາ 12:42-44,48ຂ)

ໃນລູກາ 12:35-41, ພຣະເຢຊູຕ້ອງການໃຫ້ພວກສາວົກດຳຣົງຊີວິດດ້ວຍການຕຽມພ້ອມ. ພຣະອົງໄດ້ໃຊ້ຄຳປຽບທຽບຂອງພວກຂ້ອຍໃຊ້ທີ່ຕຽມຕົວລໍຖ້າການກັບມາຂອງນາຍ. ພຣະເຢຊູໄດ້ເນັ້ນໃຫ້ເຫັນວ່າຄົນຈະຕ້ອງຮັບຜິດຊອບຕໍ່ການໃຊ້ທີ່ໄດ້ມອບໝາຍໃຫ້ພວກເຂົາ. **ຜູ້ບໍຣິຫານທີ່ສັດຊື່ແລະໄວຕໍ່ໜ້າທີ່ຮັບຜິດຊອບ**, ຫລືຜູ້ຄຸ້ມຄອງເບິ່ງແຍງທີ່ດີ, ແມ່ນຜູ້ທີ່ຫ່ວງໃຍຕໍ່ເຂົ້າຂອງ**ເຮືອນຊານ**ຂອງນາຍແລະຈັດແບ່ງໜ້າທີ່ໃຫ້**ຂ້ອຍໃຊ້**ຄືກັນກັບທີ່ນາຍໄດ້ເຮັດນັ້ນ.   ຈາກຄຳອຸປະມາສັ້ນໆນີ້ສອນພວກເຮົາວ່າສິ່ງຂອງທີ່ພວກເຮົາມີຢູ່ນີ້ໄດ້ມອບໃຫ້ເຮົາໂດຍມືຂອງນາຍຄືພຣະເຢຊູ.    ພຣະອົງຄາດຫວັງຈາກເຮົາໃຫ້ໃຊ້ຢ່າງສລາດແລະສັດຊື່. ພວກເຮົາຈະບໍ່ເຮັດໃຫ້ເສັຍປໂຍດຂອງວັດຖຸສິ່ງຂອງໂດຍນຳມາໃຊ້ເພື່ອບຳເລີຄວາມສນຸກສນານຂອງພວກເຮົາ,    ແຕ່ວ່າແທນທີ່ຈະເຮັດຢ່າງນັ້ນໃຫ້ເຮົາເຮັດໃຫ້ເປົ້າໝາຍຂອງຜູ້ເປັນນາຍໃຫ້ຄົບເຕັມ.  ພຣະເຢຊູໄດ້ບັນລະຍາຍວ່າພຣະເຈົ້າປຽບເໝືອນເຈົ້ານາຍ, ເປັນເຈົ້າເໜືອທຸກສິ່ງ.   ພວກເຮົາເປັນຜູ້ຮັບໃຊ້ຫລືຂ້ອຍໃຊ້ຂອງພຣະອົງ, ພວກເຮົາດີໃຈໃນການຍິນຍອມຮັບການເປັນພຣະເຈົ້າຂອງພຣະອົງເໜືອຕົວເຮົາແລະຂອງທຸກສິ່ງທີ່ເຮົາມີ. ຫລັງຈາກທີ່ພວກເຮົາສັດຊື່ ເຮັດໃຫ້ເປົ້າໝາຍຂອງພຣະອົງສຳເຣັດໃນຄວາມຄຸ້ມຄອງເບິ່ງແຍງຂອງພວກເຮົາ, ພຣະອົງຈະປະທານຣາງວັນໃຫ້ພວກເຮົາ.   ພຣະພອນຂອງພຣະເຈົ້າອີກອັນນຶ່ງສຳລັບຜູ້ຄຸ້ມຄອງເບິ່ງແຍງທີ່ສັດຊື່ນັ້ນກໍຄືຖືກ**ມອບຊັພສິ່ງຂອງໃຫ້ເພີ້ມຕື່ມ**ຜູ້ນັ້ນອີກ. ແຕ່ວ່າ, ເມື່ອມີພຣະພອນຫລາຍກໍມີໜ້າທີ່ຮັບຜິດຊອບຫລາຍຂຶ້ນ. ໃນຂໍ້ທີ 48, ພຣະເຢຊູໄດ້ເຕືອນພວກສາວົກວ່າທຸກໆຄົນທີ່**ຖືກປະທານໃຫ້ຫລາຍກໍຈະຖືກຫວັງເອົາຈາກຜູ້ນັ້ນຫລາຍ**. ເມື່ອພຣະເຈົ້າມອບໃສ່ມືຂອງພວກເຮົາ**ຫລາຍ**ພຣະອົງກໍ**ຫວັງຈະໄດ້ຮັບຈາກເຮົາຫລາຍຂຶ້ນ**. ມີໜ້າທີ່ຮັບຜິດຊອບຫລາຍກໍມີຄວາມຮັບຜິດຊອບຫລາຍ. ພວກທີ່ເຊື່ອຕ້ອງໃຊ້ທຸກໆສິ່ງທີ່ມີຢູ່ນັ້ນເພື່ອນຳພຣະກຽດມາສູ່ພຣະຜູ້ເປັນເຈົ້າແລະນຳປໂຍດສູ່ຣາຊອານາຈັກຂອງພຣະອົງ.   ພຣະເຢຊູໄດ້ສອນວ່າຜູ້ທີ່ເຊື່ອບໍ່ຄວນຈະຈົດຈໍ່ຊີວິດຂອງພວກເຂົາໃສ່ໃນການເພີ້ມພູນຄວາມຮັ່ງມີດ້ານວັດຖຸສິ່ງຂອງ   ເພື່ອຄວາມສນຸກສນານຂອງຕົນເອງ, ແຕ່ວ່າຈົ່ງຊອກຫາຣາຊອານາຈັກຂອງພຣະເຈົ້າກ່ອນສເມີ.  ການສອນນີ້ມັນແຕກຕ່າງຈາກຄວາມຄິດຂອງຊາວໂລກສ່ວນຫລາຍແນວໃດ?   ບົດຮຽນໃນມື້ນີ້ມີມູນຄວາມຈິງຫລາຍຂໍ້ກ່ຽວກັບສາຍສຳພັນລະຫວ່າງຄຣິສຕຽນຕໍ່ສິ່ງຂອງທີ່ຕົນເປັນເຈົ້າຂອງນັ້ນ:

- ລະບົບການຕີຣາຄາຂອງພວກເຮົາຄວນວາງພື້ນຖານໃສ່ສິ່ງທີ່ນິຣັນດອນ, ບໍ່ແມ່ນວັດຖຸສິ່ງຂອງຊົ່ວຄາວ.
- ຄວາມວາງໃຈຂອງພວກເຮົາຄວນຈະເປັນໃນທຳນອງທີ່ວ່າພຣະບິດາຈະເບິ່ງແຍງຫ່ວງໃຍລູກຂອງພຣະອົງ.
- ຣາຊອານາຈັກຂອງພຣະເຈົ້າຄວນຈະເປັນສິ່ງສຳຄັນລຳດັບນຶ່ງໃນຊີວິດເຮົາ.
- ໜ້າທີ່ຮັບຜິດຊອບຂອງພວກເຮົາຄວນຈະສະແດງອອກເຖິງຄວາມຮັບຜິດຊອບຂອງພວກເຮົາວ່າເປັນຜູ້ເບິ່ງແຍງດູແລທີ່ດີຕໍ່ເຂົ້າຂອງເຮືອນຊານຂອງຜູ້ເປັນນາຍພວກເຮົາຄືພຣະຄຣິດ.